ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
======0=0=0======

ສມກຈ
MFA
ສະມາຄົມການເງິນຈຸລະພາກ

ເລກທີ 41/2020 ສມກຈ
ນະຄອນຫຼວງວຽງຈັນ, ວັນທີ **09/04/2020**

# <u>ໜັງສືແຈ້ງການ</u>

**ຮຽນ:** ທ່ານ ປະທານ ແລະ ອໍານວຍການ ສກຈ/ສສງ ທີ່ເປັນ ສະມາຊິກ ສມກຈ ທີ່ນັບຖື,
**ເລື່ອງ:** ມາດຕະການຊ່ວຍເຫຼືອແບ່ງເບົາ ຄອບຄົວພະນັກງານ ແລະ ລູກຄ້າ ທີ່ໄດ້ຮັບຜົນກະທົບ ຈາກ ເຊື້ອໄວຣັດ Covid-19

- ອີງຕາມມະຕິວ່າດ້ວຍການຮັບມືກັບການລະບາດຂອງພະຍາດອັກເສບປອດ ຈາກ ເຊື້ອຈຸລະໂລກ ໂຄໂຣນາສາຍພັນໃໝ່, ເລກທີ 03/ລບ, ລົງວັນທີ 23.03.2020
- ຄໍາສັ່ງແນະນໍາວ່າດ້ວຍການຈໍາກັດບໍລິເວນຢູ່ສະຖານທີ່ພັກເຊົາຂອງຕົນເອງ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດພະຍາດ COVID-19, ເລກທີ 015/ສພກ, ລົງວັນທີ 24.03.2020
- ອີງຕາມການເລື່ອນເວລາການສົ່ງເອກະສານລາຍງານການເງິນ ແລະ ລາຍງານຜົນການເຄື່ອນໄຫວວຽກງານປະຈໍາປີ 2019 ຈົນຮອດວັນທີ 30 ເມສາ 2020, ເລກທີ 0636/ທກງ, ລົງວັນທີ 26.03.2020
- ອີງຕາມຂໍ້ຕົກລົງ ວ່າດ້ວຍນະໂຍບາຍສິນເຊື່ອ ເພື່ອແກ້ໄຂຜົນກະທົບຈາກສະພາບການລະບາດ, COVID-19, ເລກທີ 238/ທຫລ, ລົງວັນທີ 26.03.2020
- ອີງຕາມກອງປະຊຸມສະພາບໍລິຫານ ສມກຈ ສະເພາະກິດ ວັນທີ 27.03.2020
- ອີງຕາມຄໍາສັ່ງ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19, ເລກທີ 06/ນຍ, ວັນທີ 29.03.2020

ເພື່ອປະຕິບັດຕາມແຈ້ງການຂອງລັດຖະບານ ໃນການປ້ອງກັນການແຜ່ລະບາດຂອງເຊື້ອໄວຣັດ COVID-19 ແລະ ສະພາບການຕົວຈິງ ທີ່ວ່າ ທຸກໆ ຫົວໜ່ວຍທຸລະກິດ ລວມທັງ ສກຈ/ສສງ ແລະ ທຸລະກິດລູກຄ້າ ຂອງທ່ານ ໄດ້ຮັບຜົນກະທົບ, ສະມາຄົມການເງິນຈຸລະພາກ (ສມກຈ) ຂໍຖືເປັນກຽດແຈ້ງມາຍັງທ່ານເພື່ອພິຈາລະນາ ບັນດາມາດຕະການຕ່າງໆ ດັ່ງນີ້:

1. ຊ່ວຍສະກັດກັ້ນ ແລະ ປ້ອງກັນ ການລະບາດ ເຊັ່ນ: ມີສື່ໂຄສະນາຢູ່ຫ້ອງການ, ມີເຈວລ້າງມື, ເຄື່ອງແທກອຸນຫະພູມ ກ່ອນເຂົ້າຫ້ອງການ, ມີຜ້າປິດປາກໃຫ້ພະນັກງານ ແລະ ລູກຄ້າ, ຮັກສາໄລຍະຫ່າງຕັ່ງນັ່ງຂອງລູກຄ້າ, ຮັກສາໄລຍະຫ່າງໄລຍະໃນການຈັດປະຊຸມ ຫຼື ຖ້າເປັນໄປໄດ້ ໃຫ້ ປະຊຸມທາງອອນລາຍ ແລະ ຜັດປ່ຽນກັນປະຈໍາການ-ການເຮັດວຽກຢູ່ເຮືອນ ເຮັດໃຫ້ຫຼຸດຜ່ອນຂອງຈໍານວນຄົນ.

2. ພິຈາລະນາຕາມຄວາມເໝາະສົມ ໃນການສະໜັບສະໜູນພະນັກງານ ໂດຍມີນະໂຍບາຍພິເສດ ໃນການປ່ອຍເງິນກູ້ສຸກເສີນສຳລັບ ພະນັກງານ ທີ່ມີ ດອກເບ້ຍພິເສດ ຫລື 0% ໃນໄລຍະ 3-6 ເດືອນ ເພື່ອຊື້ສິ່ງຂອງທີ່ຈຳເປັນເພື່ອມາແຮໄວ້ໃນຊ່ວງວິກິດນີ້ ແລະ ກວດສຸຂະພາບ.
3. ຜ່ອນຜັນອັດຕາດອກເບ້ຍ ຫຼື ໄລຍະເວລາການຜ່ອນຊຳລະ ໂດຍບໍ່ມີການປັບໄໝ ໃຫ້ແກ່ລູກຄ້າຕາມແຕ່ລະກໍລະນີຕາມຄວາມເໝາະສົມ ແລະ ຄວາມສາມາດຂອງສະຖາບັນ.
4. ຂໍໃຫ້ອົງກອນຂອງທ່ານແນະນຳໃຫ້ພະນັກງານປະຕິບັດຕາມຄຳສັ່ງແນະນຳຂອງລັດຖະບານອອກມາແຕ່ລະໄລຍະຢ່າງເຄັ່ງຄັດ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອພິຈາລະນາແລະໃຫ້ຄວາມຮ່ວມມືດ້ວຍ.

ຮຽນ ມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ຕາງສະມາຄົມການເງິນຈຸລະພາກ

ສົມພອນ ສີແສງລັດ
ປະທານ ສະມາຄົມການເງິນຈຸລະພາກ

ຜູ້ປະສານງານ ສມກຈ: ຊາວະນາ ໂພທິລາດ 020 54666456